Washington State Health Care Authority

# ບົດເວົ້າສໍາລັບວິດີໂອຖະແຫຼງການການຕໍ່ຕ້ານການແບ່ງແຍກເຊື້ອຊາດເພື່ອສະໜັບສະໜູນຄວາມເທົ່າທຽມ (PEAR)

ຂ້າງລຸ່ມແມ່ນຄໍາເວົ້າ (ບົດເວົ້າ) ຈາກວິດີໂອຖະແຫຼງການ PEAR ຂອງອົງການດູແລສຸຂະພາບ (HCA). ໃນວິດີໂອນີ້, Lou McDermott, Quyen Huynh ແລະ Robin Vazquez ຈະນໍາສະເໜີຄວາມພະຍາຍາມຕໍ່ PEAR ໃນໜ່ວຍງານພວກເຮົາ.

## LOU McDERMOTT

ຍິນດີຕ້ອນຮັບທຸກຄົນ. ຍິນດີຕ້ອນຮັບທຸກຄົນ. ກ່ອນອື່ນໝົດ, ສິ່ງທີ່ສະແດງຢູ່ໜ້າຈໍແມ່ນຖະແຫຼງການການຕໍ່ຕ້ານການແບ່ງແຍກເຊື້ອຊາດເພື່ອສະໜັບສະໜູນຄວາມເທົ່າທຽມ (ຫຼື PEAR) ໃນໜ່ວຍງານພວກເຮົາ, ເຊິ່ງພວກເຮົາຈະເວົ້າເຖິງຕະຫຼອດວິດີໂອນີ້. ພວກເຮົາຈະລົມກັນເພີ່ມເຕີມກ່ຽວກັບສິ່ງນີ້ໃນອີກຊົ່ວໄລຍະໜຶ່ງ. ຂ້າພະເຈົ້າຊື່ Lou McDermott ແລະ ຂ້າພະເຈົ້າຂໍໃຊ້ຄໍາແທນນາມວ່າ ລາວ (ຜູ້ຊາຍ). ຂ້າພະເຈົ້າເປັນຄົນສູງທີ່ມີຜົມສັ້ນ; ຂ້າພະເຈົ້າກໍາລັງສວມໃສ່ກາລະວັດສີຟ້າພ້ອມກັບເສື້ອຄຸມສີຟ້າ ແລະ ເສື້ອເຊີດສີບົວ ແລະ ສີຟ້າ. ຂ້າພະເຈົ້າເປັນຮອງຜູ້ອໍານວຍການສໍາລັບອົງການດູແລສຸຂະພາບ ຫຼື ເປັນທີ່ຮູ້ຈັກກັນອີກວ່າ HCA. ຂ້າພະເຈົ້າຍັງເປັນຜູ້ສະໜັບສະໜູນຕົວແທນສໍາລັບວຽກງານ PEAR ໃນໜ່ວຍງານຂອງພວກເຮົາ. ເຖິງແມ່ນວ່າວຽກງານບາງຢ່າງກ່ຽວກັບຄວາມເທົ່າທຽມດ້ານສຸຂະພາບຂອງພວກເຮົາເປັນວຽກທີ່ໃໝ່, ເຊິ່ງລວມເຖິງ PEAR, ຄວາມເທົ່າທຽມດ້ານສຸຂະພາບບໍ່ແມ່ນເລື່ອງໃໝ່ສໍາລັບ HCA. HCA ແມ່ນຜູ້ຊື້ການດູແລສຸຂະພາບລາຍໃຫຍ່ທີ່ສຸດໃນລັດວໍຊິງຕັນ. ໃນປັດຈຸບັນ, ພວກເຮົາຮັບໃຊ້ຫຼາຍກວ່າ 2.7 ລ້ານຄົນຜ່ານ Apple Health (ເຊິ່ງເປັນທີ່ຮູ້ຈັກກັນອີກວ່າ Medicaid), ຄະນະກໍາມາທິການຄຸ້ມຄອງສິດທິປະໂຫຍດລູກຈ້າງສາທາລະນະ ແລະ ໂຄງການຂອງຄະນະກໍາມາທິການຄຸ້ມຄອງສິດທິປະໂຫຍດລູກຈ້າງຂອງໂຮງຮຽນ. HCA ຍັງໃຫ້ການບໍລິການສຸຂະພາບທາງພຶດຕິກໍາແກ່ຜູ້ຢູ່ອາໄສທຸກຄົນໃນລັດວໍຊິງຕັນ, ບໍ່ວ່າຈະມີປະກັນໄພຫຍັງກໍຕາມ. ສໍາລັບປະຊາຊົນທີ່ລົງທະບຽນໃນ Apple Health, ເຊິ່ງມີປະມານ 2.2 ລ້ານຄົນ. ພວກເຮົາຊີ້ນໍາໃນຄວາມພະຍາຍາມເພື່ອປ່ຽນແປງການດູແລສຸຂະພາບ. ພວກເຮົາເຮັດວຽກໂດຍຮ່ວມມືກັບຜູ້ຮ່ວມມືຂອງພວກເຮົາ ແລະ ຊຸມຊົນທ້ອງຖິ່ນເພື່ອຮັບປະກັນວ່າຜູ້ຢູ່ອາໄສໃນລັດວໍຊິງຕັນຈະມີສິດເຂົ້າເຖິງການດູແລສຸຂະພາບທີ່ດີຂຶ້ນໃນຕົ້ນທຶນທີ່ຕໍ່າກວ່າ. ມື້ນີ້ໃນວິດີໂອນີ້, ພວກເຮົາຈະເວົ້າກ່ຽວກັບຖະແຫຼງການ PEAR ຂອງ HCA, ເຊິ່ງລະບຸຄວາມມຸ່ງໝັ້ນຂອງພວກເຮົາໃນການຈັດຕັ້ງປະຕິບັດ PEAR, ຄວາມຄາດຫວັງສໍາລັບລູກຈ້າງຂອງພວກເຮົາ ແລະ ການຮ່ວມມືກັບຊຸມຊົນທົ່ວລັດ. ແລ້ວ PEAR ແມ່ນຫຍັງ? ໃນເດືອນມີນາຂອງປີ ‘22, ຜູ້ວ່າການ Inslee ໄດ້ຊີ້ນໍາໜ່ວຍງານຂອງລັດຖະບານເພື່ອຈັດຕັ້ງປະຕິບັດຄໍາສັ່ງບໍລິຫານສະບັບ 22-04: ການຈັດຕັ້ງປະຕິບັດແຜນການ ແລະ ໜັງສືຍຸດທະສາດສໍາລັບການຕໍ່ຕ້ານການແບ່ງແຍກເຊື້ອຊາດເພື່ອສະໜັບສະໜູນຄວາມເທົ່າທຽມຂອງລັດວໍຊິງຕັນ. ຈຸດປະສົງຂອງ PEAR ແມ່ນເພື່ອສົ່ງເສີມສະພາບແວດລ້ອມທີ່ສ້າງຄວາມເປັນເຈົ້າຂອງ ແລະ ສ້າງວັດທະນະທໍາທີ່ສະໜັບສະໜູນຄວາມເທົ່າທຽມ ແລະ ຕໍ່ຕ້ານການແບ່ງແຍກເຊື້ອຊາດສໍາລັບລູກຈ້າງຂອງ HCA ແລະ ຄົນທີ່ພວກເຮົາເຮັດວຽກນໍາ ແລະ ຮັບໃຊ້. ສ່ວນຂອງ PEAR ໃນວຽກງານຄວາມເທົ່າທຽມດ້ານສຸຂະພາບຂອງ HCA, ເຊິ່ງເປັນຄຸນຄ່າຫຼັກໃນໜ່ວຍງານຂອງພວກເຮົາ. ສາລັບ HCA, ຄວາມເທົ່າທຽມດ້ານສຸຂະພາບໝາຍຄວາມວ່າທຸກຄົນມີໂອກາດທີ່ເທົ່າທຽມ ແລະ ເປັນທໍາເພື່ອທີ່ຈະມີສຸຂະພາບດີໃຫ້ຫຼາຍເທົ່າທີ່ເປັນໄປໄດ້. ຕອນນີ້, ຂ້າພະເຈົ້າຕ້ອງການສົ່ງຕໍ່ໃຫ້ Quyen.

## QUYEN HUYNH

ຂອບໃຈ, Lou. ຂ້າພະເຈົ້າຊື່ DoQuyen Huynh. ຂ້າພະເຈົ້າຂໍໃຊ້ຄໍາແທນນາມ ລາວ (ຜູ້ຍິງ). ຂ້າພະເຈົ້າກໍາລັງສວມໃສ່ເສື້ອຊັ້ນນອກສີດໍາ, ເສື້ອຄຸມສັ້ນທີ່ມີລາຍດອກຫຼາກຫຼາຍສີ ແລະ ຂ້າພະເຈົ້າມີຜົມດໍາທີ່ຍາວຫຼາຍ. ຂ້າພະເຈົ້າເປັນຜູ້ອໍານວຍການຄວາມເທົ່າທຽມດ້ານສຸຂະພາບທີ່ HCA ແລະ ຮ່ວມຊີ້ນໍາໃນຄວາມພະຍາຍາມຕໍ່ PEAR ຂອງພວກເຮົາກັບ Robin, ເຊິ່ງທ່ານຈະພົບໃນອີກຊົ່ວໄລຍະໜຶ່ງ. ຂ້າພະເຈົ້າຈະເວົ້າເຖິງພາກສ່ວນກະແສວຽກຂອງ PEAR ໃນຖະແຫຼງການ PEAR. ສ່ວນໜຶ່ງໃນວຽກງານ PEAR ຂອງພວກເຮົາຄືການໃຫ້ຄວາມສໍາຄັນກັບສີ່ຂົງເຂດ, ເຊິ່ງເອີ້ນວ່າສາຍບໍລິການ ຫຼື ກະແສວຽກ PEAR. ຂົງເຂດທໍາອິດແມ່ນຝ່າຍຜູ້ນໍາ, ການປະຕິບັດງານ ແລະ ການບໍລິການ. ສິ່ງນີ້ຄືການຍົກລະດັບການປະຕິບັດ ແລະ ລະບົບ PEAR ໃນທຸກລະດັບຂອງລັດຖະບານຂັ້ນລັດຜ່ານການພັດທະນາອົງການທີ່ໂປ່ງໃສ ແລະ ມີຄວາມຮັບຜິດຊອບ; ຄວາມເປັນຜູ້ນໍາທີ່ປັບໃຫ້ແທດເໝາະ; ແລະ ຜູ້ດໍາເນີນການປ່ຽນແປງ. ໃນຂົງເຂດທີສອງ, ຝ່າຍຍຸດທະສາດຂໍ້ມູນ ແລະ ການລາຍງານກໍາລັງພັດທະນາຍຸດທະສາດຂໍ້ມູນ ແລະ ຂະບວນການລາຍງານທີ່ສະໜັບສະໜູນການພັດທະນາອົງການ PEAR ຂອງລັດວໍຊິງຕັນ. ສິ່ງນີ້ຈະຊ່ວຍໃຫ້ຮັບປະກັນວ່າພວກເຮົາກໍາລັງໃຫ້ຄວາມສໍາຄັນຕໍ່ພື້ນທີ່ ແລະ ປະຊາກອນທີ່ມີຄວາມຕ້ອງການຫຼາຍທີ່ສຸດ. ໃນຂົງເຂດທີສາມ, ຝ່າຍດູແລການມີສ່ວນຮ່ວມ ແລະ ການຮ່ວມມືກັບຊຸມຊົນກໍາລັງເຮັດວຽກເພື່ອຮັບປະກັນວ່າຊຸມຊົນ, ລູກຈ້າງ ແລະ ຜູ້ຮ່ວມມືຂອງພວກເຮົາຈະຮ່ວມມືກັນເພື່ອພັດທະນາ ແລະ ແຈ້ງກ່ຽວກັບຄວາມພະຍາຍາມຕໍ່ PEAR ຂອງລັດວໍຊິງຕັນ. ພວກເຮົາກໍາລັງສ້າງການຮ່ວມມື ແລະ ຊັບພະຍາກອນຂອງ HCA ແລະ ເພີ່ມສັກກະຍາພາບເພື່ອຂະຫຍາຍສິດສຽງຂອງຊຸມຊົນ. ຢ່າງສຸດທ້າຍແມ່ນກະແສວຽກຂົງເຂດສຸດທ້າຍ. ຝ່າຍຄວາມເທົ່າທຽມແຮງງານກໍາລັງລົງທຶນໃນອົງການ ແລະ ວັດທະນະທໍາ PEAR. ສິ່ງນີ້ໝາຍຄວາມວ່າພວກເຮົາຈະສ້າງທ່ີສິ່ງທີ່ມີຄວາມຫຼາກຫຼາຍທາງເຊື້ອຊາດ ແລະ ຕອບສະໜອງວັດທະນະທໍາສໍາລັບລູກຈ້າງຂອງລັດໃນທຸກລະດັບ. ພວກເຮົາກໍາລັງສ້າງໂອກາດສໍາລັບແຕ່ລະຄົນເພື່ອສະແດງຕົວຕົນທີ່ສົມບູນແບບຂອງພວກເຂົາ ແລະ ຮູ້ສຶກວ່າເປັນທີ່ຕ້ອນຮັບ, ໄດ້ຮັບການສະໜັບສະໜູນ ແລະ ການເຊີດຊູ. ພວກເຮົາຍັງມຸ່ງໝັ້ນທີ່ຈະແກ້ໄຂວິກິດແຮງງານການດູແລສຸຂະພາບໃນລັດຂອງພວກເຮົາ, ໂດຍມີເປົ້າໝາຍໃນການສ້າງທ່ີສິ່ງຜູ້ເຮັດວຽກດູແລສຸຂະພາບຢ່າງເທົ່າທຽມ ແລະ ຫຼາກຫຼາຍເພື່ອຮັບໃຊ້ທົ່ວລັດວໍຊິງຕັນ. ຕອນນີ້, ຂ້າພະເຈົ້າຈະສົ່ງຕໍ່ໃຫ້ກັບ Robin.

## ROBIN VAZQUEZ

ຂອບໃຈ, Quyen. ຂ້າພະເຈົ້າຊື່ Robin Vazquez ແລະ ຂ້າພະເຈົ້າຂໍໃຊ້ຄຳແທນນາມວ່າ ລາວ (ຜູ້ຍິງ). ຂ້າພະເຈົ້າມີຜິວສີຂາວຊີດພ້ອມກັບຜົມສັ້ນສີສົ້ມ ແລະ ຕາສີຟ້າອ່ອນ ແລະ ຂ້າພະເຈົ້າກຳລັງສວມໃສ່ເສື້ອເຊີດຕິດກະດຸມສີຂຽວໝາກກອກ.
ຂ້າພະເຈົ້າເປັນຜູ້ອຳນວຍການຝ່າຍຊັບພະຍາກອນລູກຈ້າງຢູ່ອົງການດູແລສຸຂະພາບ ແລະ ຂ້າພະເຈົ້າຮ່ວມຊີ້ນຳໃນຄວາມພະຍາຍາມຕໍ່ PEAR ຂອງພວກເຮົາກັບ Quyen. ຢູ່ທີ່ HCA, ພວກເຮົາພິຈາລະນາວ່າຕົນເອງເປັນຜູ້ດຳເນີນການປ່ຽນແປງຄວາມເທົ່າທຽມດ້ານສຸຂະພາບ. ໃນຖານະຜູ້ດຳເນີນການປ່ຽນແປງ, HCA ສົ່ງເສີມໃຫ້ພະນັກງານ ແລະ ຜູ້ນຳທຸກຄົນຂອງພວກເຮົາເພື່ອ: ປະກອບສ່ວນໃນຄວາມພະຍາຍາມເພື່ອຄວາມເທົ່າທຽມດ້ານສຸຂະພາບ ແລະ ຄວາມຫຼາກຫຼາຍ, ຄວາມເທົ່າທຽມ ແລະ ຄວາມກວມລວມ (ຫຼື DEI), ມີຫຼາຍວິທີທີ່ຈະມີສ່ວນຮ່ວມ; ຮັບການຝຶກອົບຮົມ ແລະ ເຂົ້າຮ່ວມງານກິດຈະກຳທີ່ໃຫ້ຄວາມສຳຄັນກັບຄວາມເທົ່າທຽມດ້ານສຸຂະພາບ ແລະ DEI; ສະແດງ ແລະ ສ້າງຄວາມສາມາດໃນການປະຕິບັດຄວາມເທົ່າທຽມດ້ານສຸຂະພາບ ແລະ ຄວາມເທົ່າທຽມ ແລະ ຄວາມກວມລວມໂດຍເປັນສ່ວນໜຶ່ງໃນວຽກງານຂອງພວກເຂົາ; ໃຫ້ ແລະ ແບ່ງປັນຊັບພະຍາກອນກັບທີມງານ ແລະ ເພື່ອນຮ່ວມງານຂອງພວກເຂົາ; ເຂົ້າຮ່ວມໃນການສົນທະນາໃນບ່ອນເຮັດວຽກ ແລະ ຢູ່ນອກບ່ອນເຮັດວຽກກ່ຽວກັບຄວາມເທົ່າທຽມດ້ານສຸຂະພາບ ແລະ DEI; ຄົບໜ້າໃນການເດີນທາງຂອງພວກເຂົາ ແລະ ການປູກຈິດສຳນຶກ ແລະ ຄວາມເຂົ້າໃຈກ່ຽວກັບຄວາມເທົ່າທຽມດ້ານສຸຂະພາບ ແລະ DEI. ຕອນນີ້, ຂ້າພະເຈົ້າຕ້ອງການສົ່ງກັບຄືນໃຫ້ Quyen, ເຊິ່ງລາວຈະເວົ້າກ່ຽວກັບທີມງານໃຫ້ຄຳປຶກສາຊຸມຊົນກ່ຽວກັບ PEAR ຂອງ HCA (ຍັງເອີ້ນວ່າ PEAR CAT). ລາວຈະເວົ້າເຖິງສ່ວນນັ້ນໃນຖະແຫຼງການ.

## QUYEN HUYNH

ຂອບໃຈ, Robin. PEAR CAT ຂອງ HCA ຄືຜູ້ຮ່ວມມື ແລະ ຜູ້ເຊື່ອມໂຍງທີ່ສາຄັນໃນຊຸມຊົນ. ພວກເຮົາເຊີດຊູເວລາ, ປະສົບການ ແລະ ທັດສະນະຄະຕິທີ່ເປັນເອກະລັກຂອງພວກເຂົາ. ສະມາຊິກເຮັດບົດບາດທີ່ສຳຄັນໃນການແຈ້ງການກ່ຽວກັບຍຸດທະສາດຄວາມເທົ່າທຽມດ້ານສຸຂະພາບຂອງ HCA; ກິດຈະກຳການມີສ່ວນຮ່ວມໃນຊຸມຊົນ; ແລະ ການແບ່ງປັນປະສົບການສ່ວນຕົວ ແລະ ການໃຊ້ຊີວິດຂອງພວກເຂົາກ່ຽວກັບວ່າໂຄງການ ແລະ ການບໍລິການຂອງ HCA ສົ່ງຜົນກະທົບແນວໃດຕໍ່ພວກເຂົາ ແລະ ຊຸມຊົນຂອງພວກເຂົາ. ເຖິງແມ່ນວ່າ PEAR CAT ເປັນກຸ່ມທີ່ສ້າງຂຶ້ນໃໝ່, ຂ້າພະເຈົ້າຕື່ນເຕັ້ນທີ່ຈະຮຽນຮູ້ ແລະ ເຮັດວຽກກັບສະມາຊິກຊຸມຊົນຈາກທົ່ວລັດ. ໃນຂະນະທີ່ພວກເຮົາສະຫຼຸບໃນວິດີໂອນີ້, ຂ້າພະເຈົ້າຕ້ອງການເວົ້າຢ້ຳສິ່ງທີ່ Lou ຫາກໍແບ່ງປັນໃນສອງສາມນາທີທີ່ຜ່ານມາ. ໜ່ວຍງານຂອງພວກເຮົາລົງທຶນໃນ PEAR. ພວກເຮົາສົ່ງເສີມສະພາບແວດລ້ອມທີ່ພະນັກງານ ແລະ ຄົນທີ່ພວກເຮົາເຮັດວຽກນຳ ແລະ ຮັບໃຊ້ຮູ້ສຶກມີຄຸນຄ່າ, ເປັນທີ່ເຄົາລົບ ແລະ ໄດ້ຮັບຄວາມສຳຄັນ. ພວກເຮົາຕ້ອງການສ້າງຄວາມເປັນເຈົ້າຂອງ ແລະ ຊ່ວຍໃຫ້ລັດຂອງພວກເຮົາກາຍມາເປັນລັດທີ່ເປັນຂອງທຸກຄົນ. ຜູ້ວ່າການ Inslee ໄດ້ແບ່ງປັນວິໄສທັດນີ້ໃນລະຫວ່າງການປະຊຸມເມື່ອບໍ່ດົນມານີ້ທີ່ກ່ຽວກັບຄວາມເທົ່າທຽມດ້ານສຸຂະພາບທົ່ວລັດ. ພວກເຮົາຕື່ນເຕັ້ນທີ່ໄດ້ຢູ່ໃນການເດີນທາງນີ້ເພື່ອສະໜັບສະໜູນຄວາມເທົ່າທຽມ ແລະ ຕໍ່ຕ້ານການແບ່ງແຍກເຊື້ອຊາດ. ແລະ ພວກເຮົາກໍເຊີນຊວນໃຫ້ທ່ານເຂົ້າຮ່ວມກັບພວກເຮົາ. ກະລຸນາເຂົ້າເບິ່ງພວກເຮົາທີ່ hca ຈ້ຳ wa ຈ້ຳ gov ຂີດທັບ health dash equity (hca.wa.gov/health-equity) ເພື່ອຮຽນຮູ້ເພີ່ມເຕີມ. ຂອບໃຈທີ່ຮັບຊົມ!